AGRICULTURE VICTORIA

# ຜັກຕົບ

*Eichhornia crassipes*

*ພືດຊະນິດນີ້, ທີ່ເອີ້ນກັນວ່າຜັກຕົບ, ແມ່ນ ພືດປະເພດຫຍ້າຢ່າງໜຶ່ງທີ່ເປັນອັນຕະຣາຍ ໃນອອສເຕຣເລັຍ. ຢູ່ໃນຣັດວິກຕໍເຣັຍ ຖືວ່າເປັນຫຍ້າຕ້ອງຫ້າມທີ່ຜິດກົດໝາຍ.*

*ທີ່ກະຊວງກະສິກຳຂອງຣັດວິກຕໍເຣັຍພວກ ເຮົາ ພະຍາຍາມເຮັດວຽກຢ່າງໜັກໃນການປ້ອງກັນສິ່ງແວດລ້ອມຂອງເຮົາຈາກພືດນີ້ ແລະເຮົາຕ້ອງການຄວາມຊ່ວຍເຫຼືອຈາກທ່ານ.*

ໃນຣັດວິກຕໍເຣັຍ ການຊື້ຫຼືຂາຍຜັກຕົບຖືວ່າຜິດກົດໝາຍ. ການຂາຍຫຼືແບ່ງປັນພືດຊະນິດນີ້ພາຍໃນຊຸມຊົນກໍຖືວ່າຜິດກົດໝາຍເຊັ່ນກັນ. ເປັນການຜິດກົດໝາຍທີ່ຈະປ່ອຍເອົາພືດນີ້ລົງໃສ່ແມ່ນໍ້າລຳຄອງໃນເຂດທ້ອງຖິ່ນ.

ຖ້າທ່ານແຈ້ງໃຫ້ກະຊວງກະສິກຳຂອງຣັດວິກຕໍເຣັຍຊາບວ່າທ່ານມີຜັກຕົບຢູ່ໃນຄວາມຄອບຄອງ ຈະບໍ່ມີການປັບໃໝ ແລະພືດດັ່ງກ່າວກໍຈະຖືກຣື້ເອົາໄປຖິ້ມຢ່າງປອດໄພ.

ພືດນີ້ເປັນໄພອັນຕຣາຍຕໍ່ສັດພື້ນບ້ານຂອງອອສເຕຣເລັຍ, ເຊັ່ນ ໂຕພເລດຕິພຸສ, ເພາະວ່າມັນໄປຕັນທາງນໍ້າໄຫຼແລະເຮັດໃຫ້ອາຫານເຫຼືອນ້ອຍລົງ

ນອກນີ້ຜັກຕົບກໍຍັງຢຸດຢັ້ງບໍ່ໃຫ້ຄົນໄດ້ເບີກບານມ່ວນຊື່ນກັບກິດຈະກຳຕ່າງໆ ເຊັ່ນ ຕຶກປາ, ຂີ່ເຮືອກາຢັກ ແລະ ຫຼິ້ນສະກີນໍ້າ. ຖ້າວ່າພືດພວກນີ້ເຂົ້າໄປໃນແມ່ນໍ້າ, ບຶງ ຫຼື ລຳທານຕ່າງໆ ມັນສາມາດເຮັດໃຫ້ພວກຊາວໄຮ່ຊາວໜ້າມີຄ່າໃຊ້ຈ່າຍສູງຂຶ້ນ ແລະ ເປັນສາເຫດໃຫ້ອາຫານມີລາຄາແພງຂຶ້ນຕາມໄປດ້ວຍ.



ຫ້າມບໍ່ໃຫ້ທຳການຊື້ຫຼືຂາຍຜັກຕົບ



ຜັກຕົບເຮັດໃຫ້ອາຫານສຳລັບໂຕພເລດຕິພູສ ເຫຼືອນ້ອຍລົງ



ທ່ານສາມາດຊ່ວຍພວກເຮົາຢຸດຢັ້ງບໍ່ໃຫ້ຫຍ້າຊະນິດນີ້ ເຂົ້າມາແຊກແຊງສິ່ງແວດລ້ອມ.

**ຕິດຕໍ່ຫາພວກເຮົາ**

ຈົ່ງແຈ້ງໃຫ້ເຮົາຊາບຖ້າທ່ານເຫັນຜັກຕົບຢູ່ໃນແມ່ນໍ້າ, ບຶງ ຫຼື ລຳທານໃນເຂດທ້ອງຖິ່ນຂອງທ່ານ ເພື່ອວ່າເຮົາຈະໄດ້ໄປຣື້ອອກແລະຊ່ວຍປ້ອງກັນສິ່ງແວດລ້ອມຂອງອອສເຕຣເລັຍ.

ຖ້າທ່ານມີຜັກຕົບຢູ່ໃນຄວາມຄອບຄອງ, ກະຣຸນາໂທເລກ 136 186 ຫຼື ອີເມວຫາ weed.spotters@ecodev.vic.gov.au. ພືດນັ້ນຈະຖືກເອົາອອກຈາກສວນຂອງທ່ານແລະເອົາໄປຖິ້ມໃຫ້ໂດຍບໍ່ເສັຍຄ່າໃດໆ.

# Water hyacinth

*Eichhornia crassipes*

This plant, known as water hyacinth, is a noxious weed in Australia. In Victoria it is a State prohibited weed.

In Victoria it is against the law to buy or sell water hyacinth. Selling or sharing these plants in the community is against the law. It is also against the law to place this plant into a local waterway.

If you let us know that you have water hyacinth plants there will not be a penalty and we will remove and safely dispose of the plants.

At Agriculture Victoria we are working hard to protect our environment from this weed and we need your help.

This plant is harmful to native Australian animals, like the platypus, because it blocks waterways and reduces their food.

It stops people from enjoying activities such as fishing, kayaking and water skiing. In rivers, lakes and streams, it can increase costs to farmers and makes our food more expensive.



*You are not allowed to buy or sell water hyacinth.*



*Water hyacinth reduces the food available for platypus.*



*You can help us stop this weed entering the environment.*

Please call us on 136 186 or email us at weed.spotters@ecodev.vic.gov.au if you have water hyacinth. We will remove it from your garden and dispose of it for free.

Please tell us if you see water hyacinth in your local river, lake or stream so we can safely remove it and help protect the Australian environment.

Published by the Department of Jobs, Precincts and Regions, Agriculture Victoria, February 2019.

© The State of Victoria 2019.

ISBN 978-1-76090-034-2 (Print)
ISBN 978-1-76090-035-9 (pdf/online/MS word)

Platypus image courtesy of the Australian Platypus Conservancy

**Disclaimer**
This publication may be of assistance to you but the State of Victoria and its employees do not guarantee that the publication is without flaw of any kind or is wholly appropriate for your particular purposes and therefore disclaims all liability for any error, loss or other consequence which may arise from you relying on any information in this publication.

***For more information about Agriculture Victoria go to agriculture.vic.gov.au or phone the Customer Service Centre on 136 186.***

Lao